ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ຝຶກອົບຮົມ ໃນຫົວຂໍ້: ການສັນຫາຄົນເກັ່ງໂດຍອີງໃສ່ມາດຖານ-ເງື່ອນໄຂສະເພາະ ແລະ ການຮັກສາຄົນເກັ່ງ






ໃນວັນທີ 12-13 ພະຈິກ 2024 ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ເປັນເຈົ້າພາບຮ່ວມກັບສູນ SEACEN ຈັດການຝຶກອົບຮົມ ຮູບແບບອອນລາຍ ໃນຫົວຂໍ້ "Competency-Based Talent Acquisition and Employee Retention (ການສັນຫາຄົນເກັ່ງໂດຍອີງໃສ່ມາດຖານ-ເງື່ອນໄຂສະເພາະ ແລະ ການຮັກສາຄົນເກັ່ງ)" ໂດຍການໃຫ້ກຽດເປັນປະທານຮ່ວມຂອງທ່ານ ນ ຂັນແກ້ວ ຫຼ້າມະນີເງົາ ຮອງຜູ້ວ່າການ ທຫລ ແລະ ທ່ານ ປອ. ນ. Cyn-Young Park ຫົວໜ້າສູນ SEACEN ຊຶ່ງມີຜູ້ເຂົ້າຮ່ວມຈາກທະນາຄານກາງ 9 ປະເທດ, ພ້ອມທັງຄະນະກົມ, ຄະນະພະແນກ ແລະ ວິຊາການທີ່ກ່ຽວຂ້ອງຂອງ ທຫລ ເຂົ້າຮ່ວມຈຳນວນ 32 ທ່ານ.

ຈຸດປະສົງຂອງການຝຶກອົບຮົມໃນຄັ້ງນີ້ ເພື່ອສ້າງຄວາມເຂົ້າໃຈຢ່າງເລິກເຊິ່ງໃຫ້ແກ່ບັນດາຜູ້ເຂົ້າຮ່ວມກ່ຽວກັບການສ້າງຍຸດທະສາດການສັນຫາພະນັກງານ, ການພັດທະນາແຜນການສັນຫາ, ການຄຸ້ມຄອງ ແລະ ການຮັກສາຄົນເກັ່ງ ແລະ ການສ້າງປະສົບການທີ່ດີໃຫ້ຜູ້ສະໝັກວຽກ ໂດຍຜ່ານການສ້າງພາບພົດທີ່ດີໃຫ້ອົງການ ແລະ ການໃຫ້ຄຸນຄ່າແກ່ພະນັກງານ, ຊຶ່ງປະກອບດ້ວຍ 5 ເນື້ອໃນ ແລະ 7 ພາກ ຄື: ❶ ການສັນຫາ ແລະ ການຮັກສາຄົນເກັ່ງ, ❷ ຍຸດທະສາດການສັນຫາຄົນເກັ່ງ, ❸ ການເລົ່າປະສົບການກ່ຽວກັບສັນຫາຄົນເກັ່ງຢູ່ທະນາຄານກາງ, ❹ ຍຸດທະສາດການຮັກສາຄົນເກັ່ງ ແລະ ❺ ການນຳໃຊ້ເຕັກໂນໂລຊີເຂົ້າໃນວຽກງານການສັນຫາ ແລະ ການຮັກສາຄົນເກັ່ງ.



ການຝຶກອົບຮົມດັ່ງກ່າວ ໄດ້ດຳເນີນເປັນເວລາ 2 ວັນເຕັມ ດ້ວຍບັນຍາກາດອັນຟົດຟື້ນ ແລະ ຜູ້ເຂົ້າຮ່ວມກໍໄດ້ມີການແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ, ເຮັດໃຫ້ການຝຶກອົບຮົມສຳເລັດລົງ ຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້ເປັນຢ່າງດີ.

**ຂ່າວ-ພາບ: ທະນາຄານແຫ່ງ ສປປ ລາວ**

*ຢູ່ເມືອງລາວ ໃຊ້ແຕ່ເງິນກີບ*